

# ຊີວິດການເປັນຢູ່ໃນເຂດຊົນນະບົດໃນຊ່ວງເວລາທີ່ເກີດວິກິດການພະຍາດລະບາດ

## ຫຼັກຖານຈາກການສຳຫຼວດຊຸມຊົນ

ພຶດສະພາ - ພະຈິກ 2022

ການສຳຫຼວດພົບວ່າປະຊາຊົນໃນທຸກໆບ້ານທີ່ໄດ້ເຮັດການສຳຫຼວດ ປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ທີ່ໄດ້ຮັບຜົນກະທົບຈາກ: ການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ວິກິດເງິນເຟີ້ທີ່ກຳລັງແຜ່ລາມ



# ຄວາມຮັບຮູ້ຂອງຊາວບ້ານຕໍ່ ກັບ ຄວາມຮຸນແຮງຂອງແຕ່ລະຜົນກະທົບ ຕໍ່ຊຸມຊົນຂັ້ນທ້ອງຖິ່ນ

ອັດຕາເງິນເຟີ້ທີ່ສູງ
ແລະ ການເພີ່ມຂຶ້ນ
ຂອງລາຄານໍ້າມັນ
ເຊື້ອໄຟ ແລະ
ອາຫານ

>

ການແຜ່ລະບາດ
ຂອງພະຍາດ
ໂຄວິດ-19

ຮອດປີ 2021 ປະຊາຊົນ
ສ່ວນໃຫຍ່ຢຸດຕາມຂ່າວກ່ຽວ
ກັບຂ່າວການແຜ່ລະບາດ
ຂອງພະຍາດໂຄວິດ

ແຕ່ ສົນໃຈຂ່າວທີ່ກ່ຽວກັບລາຄາ
ນໍ້າມັນ ແລະ ອັດຕາແລກປ່ຽນເງິນ
ບາດ ຂອງປະເທດໄທ ຫລາຍຂຶ້ນ,
ເພາະວ່າ ປຸ໋ຍ ແລະ ເຄື່ອງໃຊ້ໃນ
ການກະເສດທີ່ເຂົາເຈົ້າໃຊ້ສ່ວນ
ຫຼາຍແມ່ນນໍາເຂົ້າຈາກປະເທດໄທ,

# ຕົ້ນທຶນການຜະລິດຂອງ ຊາວກະສິກອນ ເພີ່ມຂຶ້ນ

“ລາຄານ້ຳມັນເພີ່ມຂຶ້ນຫຼາຍກວ່າ 50 ສ່ວນຮ້ອຍທຽບໃສ່ປີກາຍ, ສະນັ້ນ ຄ່າຈ້າງລົດໄຖເພື່ອໄຖດິນສວນໄດ້ເພີ່ມຂຶ້ນຈາກ 1,5 ລ້ານກີບຕໍ່ເຮັກຕາ ເປັນ 2,5 ລ້ານກີບຕໍ່ເຮັກຕາ. ຂ້ອຍໄດ້ຕັດສິນໃຈຫຼຸດເນື້ອທີ່ປູກມັນຕົ້ນລົງຈາກ 2 ເຮັກຕາມາເປັນ 1 ເຮັກຕາໃນປີນີ້ ເພາະວ່າພວກເຮົາຍັງບໍ່ຮູ້ວ່າ ເວລາເກັບກ່ຽວແລ້ວຈະຂາຍໄດ້ລາຄາເທົ່າໃດ.”





*" ຍ້ອນວ່າລາຄາປຸຍແພງຂຶ້ນ, ຊາວກະສິກອນສ່ວນໃຫຍ່ໄດ້ຫຼຸດປະລິມານການໃຊ້ປຸຍເຄມີລົງ ແລະ ຫັນໄປໃຊ້ປຸຍຄອກແທນ."*

# ລາຍຮັບຂອງຄົວເຮືອນຫຼູດລົງ

ລາຄາຜົນຜະລິດກະສິກໍາຫຼຸດລົງ ເຊັ່ນ: ລາຄາສາລີໜ້າສວນ

ກ່ອນໂຄວິດລະບາດ: 3-4 ລ້ານກີບ/ໂຕນ

ໄລຍະຕໍ່ມາ: 1 ລ້ານກີບ/ໂຕນ



ລາຍຮັບຂອງຄົວເຮືອນຈາກ ການຂາຍສັດລ້ຽງ

ແລະ ເຄື່ອງປ່າຂອງດົງ ຫຼຸດລົງ ປະມານ ເຄິ່ງໜຶ່ງ





# ຍຸດທະສາດຮັບມືກັບ ລາຍຮັບທີ່ຫຼຸດລົງ

“ຫຼາຍຄົນໄດ້ກູ້ຢືມເງິນໃນອັດຕາດອກເບ້ຍສູງ ຖີ່ຂຶ້ນ, ຊຶ່ງໝາຍຄວາມວ່າເຂົາເຈົ້າຈະມີໜີ້ສິນ ຢ່າງຫຼີກບໍ່ໄດ້. ກ່ອນທີ່ການແຜ່ລະບາດຂອງ ພະຍາດໂຄວິດ, ອັດຕາດອກເບ້ຍຕໍ່າກວ່ານີ້ ແລະ ຄົນກໍກູ້ຢືມບໍ່ຖີ່ປານໃດ."

ນາຍຈ້າງທ້ອງຖິ່ນ ທີ່ບໍ່ມີເງິນສົດ ເພື່ອຈ່າຍຄ່າ ແຮງງານບາງຄັ້ງກໍ່ໃຫ້ຄ່າຈ້າງເປັນວັດຖຸສິ່ງ ຂອງສໍາລັບຜູ້ທີ່ໃຊ້ແຮງງານເພື່ອແລກປ່ຽນ ກັບເຄື່ອງໃຊ້ ປະຈໍາວັນທີ່ຈໍາເປັນ.



ຄົນໜຸ່ມຈໍານວນຫຼາຍໄດ້ອອກຈາກຊຸມຊົນຂອງ ຕົນໄປຊອກຫາວຽກເຮັດງານທໍາ, ມີຈໍານວນຫຼວງ ຫຼາຍເດີນທາງໄປເຮັດວຽກເປັນກໍາມະກອນຢູ່ ສວນກາເຟ.

# ປະຊາຊົນປັບປ່ຽນວິທີການຊອກຢູ່ຫາກິນ

- ຊາວບ້ານໄດ້ ຫຼຸດຜ່ອນປະລິມານອາຫານການກິນທີ່ເຄີຍຊື້ຈາກຕະຫຼາດລົງ.
- ຫັນມາລ້ຽງສັດປີກ ແລະ ປູກພືດກິນເອງຫຼາຍຂຶ້ນ.
- ຊາວນາທີ່ປູກເຂົ້າໄດ້ບໍ່ພໍກິນໃນຄົວເຮືອນ ຕ້ອງຫັນມາກິນເຂົ້າໜ້ອຍລົງ ແຕ່ກິນສາລີ ແລະ ມັນດ້າງເສີມ.
- ປະຊາຊົນໃນບ້ານໄດ້ພາກັນ ໄປຊອກອາຫານຈາກປ່າຫຼາຍຂຶ້ນ.






# ຄົນໜຸ່ມທີ່ອອກໂຮງຮຽນມີຫຼາຍ



"ໃນໄລຍະທີ່ມີການປິດເມືອງເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19, ໂຮງຮຽນຖືກປິດໝົດ ແລະ ເດັກນ້ອຍບໍ່ໄດ້ຮຽນຢ່າງຫນ້ອຍເປັນເວລາຫນຶ່ງເດືອນ. ນັກຮຽນມັດທະຍົມຕົ້ນບໍ່ເອົາໃຈໃສ່ຮຽນໜັງສື ພາຍຫຼັງທີ່ໂຮງຮຽນເປີດຄືນ. ອຳນາດການປົກຄອງບ້ານ ໄດ້ຈັດປະຊຸມກັບພໍ່ແມ່ປະຊາຊົນ ເພື່ອຊຸກຍູ້ໃຫ້ລູກຫຼານໄດ້ກັບຄືນເຂົ້າໂຮງຮຽນ. ເຖິງປານນັ້ນ, ເດັກນ້ອຍຜູ້ຊາຍບາງຄົນກໍຍັງອອກໂຮງຮຽນໄປເຮັດນາກັບພໍ່ແມ່."

ປັດໄຈທີ່ພາໃຫ້ ອັດຕາການອອກໂຮງຮຽນສູງແມ່ນ:

- ຄຸນນະພາບການສຶກສາຕໍ່າ
- ມີຄວາມຫຍຸ້ງຍາກໃນການເດີນທາງໄປໂຮງຮຽນ.
- ຄົນໜຸ່ມທີ່ອອກໂຮງຮຽນ ເພື່ອຊອກວຽກເຮັດໃນອັດຕາຄ່າຈ້າງທີ່ຕໍ່າ

# ການປິ່ນປົວສຸຂະພາບຢູ່ໂຮງໝໍນ້ອຍ ແລະ ໂຮງໝໍເມືອງຍັງມີຄວາມຈຳກັດ ທັງດ້ານຄຸນນະພາບ ແລະ ຄວາມພ້ອມ

"ຂ້ອຍບໍ່ເຂົ້າໃຈວ່າເປັນຫຍັງໂຮງໝໍນ້ອຍຈຶ່ງມັກບໍ່ມີຢາເລື້ອຍໆ, ໂດຍສະເພາະ ຢາ ດີຫວັດ ແລະ ທິບຟີ້ ຊະນິດນໍ້າ [ຢາທີ່ໃຊ້ໃນການປິ່ນປົວເດັກນ້ອຍທີ່ເປັນຫວັດ] ແລະ ອາມ໋ອກຊີລີນ.

ຂ້ອຍມີລູກນ້ອຍອາຍຸຕໍ່າກວ່າຫ້າປີ. ປົກກະຕິຖ້າມີຢາຢູ່ໂຮງໝໍນ້ອຍ ພວກເຮົາບໍ່ຕ້ອງຈ່າຍຄ່າຢາ ຖ້າມີປຶ້ມສໍາມະໂນຄົວ. ພວກເຮົາມີແຕ່ຕ້ອງຈ່າຍຄ່າລົງທະບຽນ 5.000 ກີບ. ແຕ່ຖ້າໂຮງໝໍນ້ອຍບໍ່ມີຢາ, ພະນັກງານແພດຈະບອກພວກເຮົາໃຫ້ໄປຊື້ຢາຢູ່ຮ້ານຂາຍຢາ ເຊິ່ງເຈົ້າຂອງຮ້ານຂາຍຢາສ່ວນຫຼາຍກໍແມ່ນພະນັກງານແພດເອງ."






ສຸກສາລາ (ໂຮງໝໍນ້ອຍ )

# ໂດຍສະເພາະແມ່ນປະຊາຊົນທຸກຍາກ ໃນບ້ານຫ່າງໄກສອກຫຼີກ ທີ່ຢູ່ໄກຈາກໂຮງໝໍ ຈະໄປໂຮງໝໍ ກໍຕໍ່ເມື່ອໃນກໍລະນີທີ່ເຈັບປ່ວຍຮຸນແຮງ

"ທຳມະດາແລ້ວຈະຕ້ອງໄດ້ເດີນທາງຍ່າງຫນ້ອຍ 5 ກິໂລແມັດເພື່ອໄປໂຮງໝໍນ້ອຍ ແລະ ປະມານ 10-30 ກິໂລແມັດ ເພື່ອໄປໂຮງຫມໍ ເມືອງ. ຄ່າເຊົ່າລົດກະບະໄປໂຮງໝໍເມືອງແມ່ນບໍ່ຕ່ຳກວ່າ 500,000 ກີບ!"



ສະມາຊິກຂອງຊຸມຊົນໃນເຂດຊົນນະບົດ ມີແນວໂນ້ມ ທີ່ຈະປິ່ນປົວຕົນເອງ ດ້ວຍ ການຊື້ຢາກິນເອງ ແລະ ການປິ່ນປົວແບບພື້ນເມືອງ.



# ຄວາມປອດໄພໃນຊຸມຊົນ

ສະຖານະພາບຄວາມປອດໄພຢູ່ເຂດຊົນນະບົດໄດ້ຫຼຸດລົງ ມີລາຍງານການລັກລົດຈັກ ແລະ ສັດລ້ຽງເພີ່ມຂຶ້ນ ໃນລະຫວ່າງມາດຕະການ ການປິດເມືອງ

ບໍ່ມີລະບົບເຕືອນໄພລ່ວງໜ້າວ່າຈະມີນ້ຳຖ້ວມກະທັນຫັນໃນຊຸມຊົນຂອງເຂົາເຈົ້າ. ເຮັດໃຫ້ ສະມາຊິກຊຸມຊົນຕ້ອງໄດ້ອີງໃສ່ປະສົບການ ແລະ ຄວາມຮູ້ພື້ນຖານຂອງຕົນເອງເພື່ອຄາດຄະເນ ແລະ ກຽມຮັບມືກັບໄພນ້ຳຖ້ວມດ້ວຍຕົນເອງ

# ສະຫວັດດີການຊຸມຊົນ



ການສ້ອມແປງໂຄ່ງລ່າງພື້ນຖານຕ່າງໆ ບໍ່ໄດ້ຄຸນະພາບ ເປັນຕົ້ນ: ການປັບປຸງເສັ້ນທາງເຂົ້າ-ອອກເມືອງ ແລະ ເສັ້ນທາງເຂົ້າບ້ານ ທີ່ບໍ່ໄດ້ຄຸນະພາບ ໂດຍສະເພາະ ໝູ່ບ້ານຊົນນະບົດໃນເຂດພາກໃຕ້, ເຮັດໃຫ້ການສັນຈອນໄປມາຍາກ ຫຼື ບໍ່ສາມາດ ໄປມາໄດ້ໃນລະດູຝົນ

ເຂດພາກໃຕ້: ຍັງຂາດນ້ຳໃຊ້, ບໍ່ທັນມີນ້ຳປະປາໃຊ້ເປັນປົກກະຕິ, ຊຸມຊົນແມ່ນອາໄສ ແຫຼ່ງນ້ຳທຳມະຊາດ

ເຂດພາກເໜືອ: ມີລາຍງານຄວາມລົ້ມເຫຼວໃນການບຳລຸງຮັກສາລະບົບນ້ຳລິນຂອງບ້ານຍ້ອນບໍ່ມີທຶນຊ່ວຍເຫຼືອຈາກລັດ

“ໃນ 1 ປີ ພວກເຮົາເກັບພາສີທີ່ດິນ, ການຂາຍງົວ ແລະ ເຄື່ອງປ່າຂອງດົງ ໄດ້ປະມານ 1 ລ້ານກີບເທົ່ານັ້ນ”.



ລັດສົ່ງເສີມການ ພັດທະນາ ທີ່ຂັບເຄື່ອນ ໂດຍຊຸມຊົນ, ແຕ່ຊຸມຊົນພັດຍັງບໍ່ສາມາດ ເກັບລາຍຮັບໄດ້ຢ່າງພຽງພໍເພື່ອໃຫ້ ສາມາດປະຕິບັດວຽກພັດທະນາບ້ານໄດ້.



# ລະດັບການມີສ່ວນຮ່ວມຂອງປະຊາຊົນໃນເຂດຊົນນະບົດແມ່ນຈຳກັດຫຼາຍ ການປົກຄອງບ້ານແມ່ນຄຸ້ມຄອງແບບແຕ່ເທິງລົງລຸ່ມ.

ເຖິງແມ່ນວ່າໄດ້ລາຍງານເລື່ອງຜົນກະທົບຈາກບໍລິສັດຂຸດຄົ້ນບໍ່ແຮ່ ແລະ ບໍລິສັດ ປູກຝັງ, ໂຄງການທາງລົດໄຟ ລາວ-ຈີນ ແລະ ການລົງທຶນຂອງຕ່າງປະເທດຕໍ່ເຈົ້າໜ້າທີ່ລັດ ແຕ່ກໍບໍ່ຕອບກັບ ຫຼື ແກ້ໄຂບັນຫາ.

- ມີສະມາຊິກໃນຊຸມຊົນປະມານ 30 ສ່ວນຮ້ອຍເທົ່ານັ້ນ ທີ່ໄດ້ເຂົ້າຮ່ວມການວາງແຜນບ້ານ. ຊາວບ້ານທີ່ທຸກຍາກ ແລະ ດ້ອຍໂອກາດ ລວມທັງຄົນຕິດເຫຼົ້າ ແລະ ຢາເສບຕິດ ບໍ່ສູ້ໄດ້ເຂົ້າຮ່ວມກອງປະຊຸມບ້ານ.

- ການປະຊຸມ ແລະ ການປຶກສາຫາລືກ່ຽວກັບການເຄື່ອນໄຫວວຽກງານພັດທະນາບ້ານ ຄວນມີຜູ້ຕາງໜ້າຂອງທຸກຄອບຄົວເຂົ້າຮ່ວມ ເພື່ອໃຫ້ຊຸມຊົນໄດ້ຕັດສິນໃຈຮ່ວມກັນ.



ຂໍຂອບໃຈ

Thank You !

